ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ທະນາຄານແຫ່ງ ສປປ ລາວ
ກົມເຕັກໂນໂລຊີ ຂໍ້ມູນຂ່າວສານ

ເລກທີ: 865 /ກຕຂ
ນະຄອນຫຼວງວຽງຈັນ, ວັນທີ 24 JUL 2015

# ບົດແນະນຳ
# ການນຳໃຊ້ ການໂອນເງິນຜ່ານລະບົບຊຳລະມູນຄ່າສູງ RTGS
# ເປັນສະກຸນເງິນຕາຕ່າງປະເທດ (ໂດລາສະຫະລັດ ແລະ ບາດໄທ)

## I. ຈຸດປະສົງ

ບົດແນະນຳສະບັບນີ້ວາງອອກເພື່ອ ໃຫ້ຜູ້ໃຊ້ບໍລິການລະບົບສາມາດໂອນເງິນຜ່ານລະບົບຊຳລະມູນຄ່າສູງ RTGS ເປັນເງິນຕາຕ່າງປະເທດ (ໂດລາສະຫະລັດ ແລະ ບາດໄທ) ເຂົ້າໃຈເຖິງວິທີການນຳໃຊ້ລະບົບດັ່ງກ່າວໃຫ້ຖືກຕ້ອງຕາມ ວິທີ ແລະ ຂັ້ນຕອນໃນການໂອນລະຫວ່າງທະນາຄານ ຫາ ທະນາຄານ (MT202) ແລະ ຫລີກເວັ້ນ ຂໍ້ຜິດພາດທີ່ອາດຈະເກີດຂຶ້ນ.

## II. ຂັ້ນຕອນແນະນຳວິທີການນຳໃຊ້

ແຜນວາດການເຮັດວຽກຂອງ MT202ໃນລະບົບRTGS




ໃນການສົ່ງຂໍ້ຄວາມ MT202 ຈະມີ 2 ພາກສ່ວນຄື: ຜູ້ລົງບັນຊີ (Operator) ແລະ ຜູ້ກວດກາ (Controller) ເຊິ່ງມີຂັ້ນຕອນການປະຕິບັດ ດັ່ງລາຍລະອຽດລຸ່ມນີ້:

## ກ. ຜູ້ລົງບັນຊີ (Operator).

1. ເຂົ້າໄປທີ່ໂປຣແກຣມ RTGS ໃນ icon "Operator" ຢູ່ໃນໜ້າຈໍ Desktop ຕາມຮູບທີ 1 ຫຼືເຂົ້າໄປທີ່ C:\RTSX\RTSXClients\ Operator ແລະ ເລືອກ OperatorWorkplaceORA.exe .




ຮູບທີ 1

2. Log in ເຂົ້າສູ່ລະບົບ ໂດຍໃສ່ User ID ແລະ Password ຕາມຮູບທີ 2 ແລ້ວກົດປຸ່ມ OK.




ຮູບທີ 2

3. ຂັ້ນຕອນການເຂົ້າປ້ອນຂໍ້ມູນໃສ່ຂໍ້ຄວາມ MT202 ແມ່ນເຂົ້າໄປທີ່ Document → New Document → MT202 ຕາມຮູບທີ 3




ຮູບທີ 3

4. ປ້ອນຂໍ້ມູນລາຍລະອຽດຕ່າງໆໃສ່ໃນແບບຟອມຂໍ້ຄວາມ MT 202




ຮູບທີ 4

1) ຕື່ມໝາຍເລກອ້າງອີງ <u>ຕົວຢ່າງ:</u> APB0707201500001

2) ເລືອກທະນາຄານປາຍທາງ <u>ຕົວຢ່າງ:</u> COEBLALA ເຊິ່ງເລກບັນຊີທະນາຄານປາຍທາງ ແມ່ນລະບົບຈະປ່ຽນໃຫ້ແບບອັດຕະໂນມັດຂອງແຕ່ລະສະກຸນເງິນ

3) ເລືອກສະກຸນເງິນ

4) ໃສ່ຈຳນວນເງິນທີ່ຕ້ອງການໂອນ

5) ກໍລະນີທີ່ຕ້ອງການຕື່ມລາຍລະອຽດການໂອນແມ່ນໃຫ້ກົດເຄື່ອງໝາຍ "..." ຈະມີໜ້າຕ່າງເຕັ້ນຂຶ້ນມາດັ່ງຮູບທີ 5 ເພື່ອໃຫ້ຕື່ມຂໍ້ມູນ




ຮູບທີ 5:

5.1 ເລືອກ /BNF/

5.2 ຕື່ມເນື້ອໃນຈຸດປະສົງການໂອນ

5.3 ເລືອກລະຫັດຈຸດປະສົງການໂອນ

5.4 ຕື່ມເນື້ອໃນຈຸດປະສົງການໂອນເພີ່ມເຕີມ ເຊິ່ງໃນແຕ່ລະຫ້ອງຕ້ອງໄດ້ໃສ່ ເຄື່ອງໝາຍ " // " ໃສ່ດ້ານໜ້າທຸກຄັ້ງ.

5.5 ຢືນຢັນການຕື່ມລາຍລະອຽດການໂອນ

6 ສົ່ງໄປຫາຜູ້ອະນຸມັດ.

ຕົວຢ່າງ: ຮູບແບບຂໍ້ຄວາມທີ່ສຳເລັດແລ້ວ




ຮູບທີ 6

## ຂ. ຜູ້ກວດກາ Controller

1. ເຂົ້າໄປທີ່ໂປຣແກຣມ RTGS ໃນ icon Controller ຢູ່ໃນໜ້າຈໍ Desktop ດັ່ງ ຮູບທີ 7 ຫຼື ເຂົ້າໄປທີ່ C:\RTSX\RTSXClients\ Controller ແລະ ເລືອກ ControllerWorkplaceORA.exe




ຮູບທີ 7

2. Log in ເຂົ້າສູ່ລະບົບໂດຍໃສ່ User ID ແລະ Password ຕາມຮູບທີ 8, ແລ້ວກົດປຸ່ມ OK




ຮູບທີ 8

3. ຂັ້ນຕອນການເຂົ້າໄປອະນຸມັດທຸລະກຳ ແມ່ນ ເຂົ້າໄປທີ່ Document → Payments → Open ດັ່ງຮູບທີ 9




ຮູບທີ 9

4. ໃນໜ້າ Controller ໃຫ້ສັງເກດຖັນ Currency ເຊິ່ງຈະບອກໃຫ້ຮູ້ເຖິງລາຍລະອຽດຂອງສະກຸນເງິນ ທີ່ເຮັດທຸລະກຳຕາມຮູບທີ 10



Controller Workplace - Display Range: [29/03/2015 - 13/07/2015] - [Payment Transfers (to control: 1) (being prc

Session Document Table View Window Help

| Reference | Type | Status | Value Date | Currency | Amount | Priority | Confirmation ... | Se... | Sender... |
|---|---|---|---|---|---|---|---|---|---|
| AGPB070720150000 | 202 | Prepared ... | 13/07/2015 | USD | 500,000.00 | 20 | N/A | AG... | 000001... |

| Reference | Type | Status | Value Date | Currency | Amount | Priority | Confirmation ... | Se... | Sender... |
|---|---|---|---|---|---|---|---|---|---|
| ss11 | 202 | Settled... | 20/04/2015 | LAK | 1,500.00 | 20 | Unchecked | AG... | 000000... |
| dddd33 | 202 | Settled... | 20/04/2015 | LAK | 1,000.00 | 20 | Unchecked | AG... | 000000... |
| dd12 | 202 | Error: ... | 20/04/2015 | LAK | 1,000.00 | 20 | Unchecked | AG... | 000000... |
| 0000_ | 202 | Error: ... | 20/04/2015 | LAK | 1,000.00 | 20 | Unchecked | AG... | 000000... |
| dd1 | 202 | Error: ... | 22/05/2015 | LAK | 1,000.00 | 20 | Unchecked | AG... | 000000... |
| 0000_ | 202 | Error: ... | 20/04/2015 | LAK | 100.00 | 20 | Unchecked | AG... | 000000... |
| 0000_ | 202 | Error: ... | 20/04/2015 | LAK | 100.00 | 20 | Unchecked | AG... | 000000... |
| 00002 | 202 | Error: ... | 20/04/2015 | LAK | 100.00 | 20 | Unchecked | AG... | 000000... |

ຮູບທີ 10

ບົດແນະນຳສະບັບນີ້ຈະຊ່ວຍໃຫ້ການປະຕິບັດວຽກງານການໂອນເງິນ ສະກຸນເງິນ ໂດລາ ແລະ ບາດ ໃນລະບົບຊຳລະມູນຄ່າສູງ ລະຫວ່າງ ທະນາຄານ ຫາ ທະນາຄານ ໄດ້ສະດວກ, ວ່ອງໄວ, ຫຼຸດຜ່ອນຄວາມຜິດພາດ ແລະ ຂັ້ນຕອນທາງດ້ານເອກະສານ, ເຊິ່ງມີປະໂຫຍດຕໍ່ຜູ້ນຳໃຊ້ລະບົບທຸກພາກສ່ວນ.

S/ກ ຫົວໜ້າກົມເຕັກໂນໂລຊີຂໍ້ມູນຂ່າວສານ

ພານທອງ ກອງວົງສາ

ສອບຖາມເພີ່ມເຕີມ:021 241271
ກົມເຕັກໂນໂລຊີຂໍ້ມູນຂ່າວສານ
ພະແນກ ຊຳລະສະສາງອີເລັກໂຕຣນິກ